ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2121/ອຄ.ທຄວ

ນະຄອນຫຼວງວຽງຈັນ, ລົງວັນທີ 14 OCT 2015

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ
- ບັນດາຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວ

ເລື່ອງ: ການກວດກາ ຕິດຕາມ ການມີຕົວຕົນຂອງວິສາຫະກິດ ພາຍຫຼັງທີ່ໄດ້ຂຶ້ນທະບຽນວິສາຫະກິດ

- ອີງຕາມບົດບັນຍັດ ມາດຕາ 22, ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013.

ເພື່ອໃຫ້ການກວດກາ ຕິດຕາມ ການມີຕົວຕົນຂອງວິສາຫະກິດ ພາຍຫຼັງທີ່ໄດ້ຂຶ້ນທະບຽນວິສາຫະກິດ ເປັນລະບົບ ມີຄວາມຕໍ່ເນື່ອງ ແນໃສ່ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງ ຕາມເນື້ອໃນຈິດໃຈ ຂອງບົດບັນຍັດມາດຕາ 22 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ດັ່ງນີ້ :

1. ຄຳວ່າ : "ການມີຕົວຕົນຂອງວິສາຫະກິດ" ຕາມແຈ້ງການສະບັບນີ້ ໝາຍເຖິງການເຄື່ອນໄຫວ ຫລື ເຄື່ອນໄຫວທຸລະກິດຂອງວິສາຫະກິດໃດໜຶ່ງ ພາຍຫຼັງທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ໄດ້ຂຶ້ນທະບຽນວິສາຫະກິດໃຫ້ແລ້ວ ແລະ ບໍ່ມີຄວາມໝາຍກ່ຽວຂ້ອງໃດໆ ກັບຄຳວ່າ : "ການສິ້ນສຸດສະພາບຄວາມເປັນນິຕິບຸກຄົນ" ຂອງວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນວັກສາມ ມາດຕາ 72 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013 ;

2. ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ວິສາຫະກິດຕ້ອງເລີ່ມເຄື່ອນໄຫວ ພາຍໃນກຳນົດ 90 ວັນ ນັບແຕ່ວັນທີ່ໄດ້ຂຶ້ນທະບຽນວິສາຫະກິດ ເປັນຕົ້ນໄປ.

ຄຳວ່າ: "ເລີ່ມເຄື່ອນໄຫວ" ຕາມແຈ້ງການສະບັບນີ້ ຫລື ຕາມມາດຕາ 22 ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013 ໝາຍເຖິງ ການດຳເນີນກິດຈະກຳຕ່າງໆ ທີ່ກ່ຽວຂ້ອງ ໂດຍກົງກັບການເລີ່ມຕົ້ນທຸລະກິດ ຫລື ການເຄື່ອນໄຫວທຸລະກິດ ເຊັ່ນ: ກິດຈະກຳການຂໍອະນຸຍາດຕ່າງໆ ທີ່ກ່ຽວຂ້ອງກັບທຸລະກິດຂອງຕົນ (ຕົວຢ່າງ: ການ ຂໍອະນຸຍາດປຸກສ້າງໂຮງງານ ຫລື ການຂໍອະນຸຍາດນຳເຂົ້າ - ສົ່ງອອກສິນຄ້າ...), ການປຸກສ້າງໂຮງງານ ຫລື ການເຮັດສັນຍາທີ່ກ່ຽວກັບທຸລະກິດຂອງຕົນ, ການລະດົມຮຸ້ນ, ການນຳທຶນເຂົ້າມາ ເປັນຕົ້ນ ;